# Press release

Embassy of Japan in Lao PDR

3rd November 2022

**Decorations of Grand Cordon of the Order of the Rising Sun**

**On H.E. Mrs. Pany Yathotou, Vice President of the Lao PDR**

On November 3rd, 2022, the Government of Japan announced the recipients of the 2022 Autumn Conferment of Decorations on foreign nationals. Mrs. Pany was awarded Grand Cordon of the Order of the Rising Sun, in recognition of her contributions in strengthening bilateral relations and promoting friendship between Japan and Laos. Grand Cordon of the Order of the Rising Sun is a Japanese order which is awarded to those persons who have made distinguished achievements in enhancing bilateral relations.

Serving as the President of the Lao National Assembly (2010-2021), Mrs. Pany made significant contributions to the development of bilateral relations through cooperation with Japan in a wide range of fields. In addition to visiting Japan three times during her term as the President of the Lao National Assembly, Mrs. Pany actively hosted Japanese parliamentary delegations to Laos to promote exchange between the legislatures of the two countries. Mrs. Pany also led and promoted cooperation projects between Japan and Laos in a wide range of fields. For instance, in 2012, she signed an agreement with the then Japanese Justice Minister Taki who was visiting Laos to commence cooperation on the compilation of the Lao Civil Code. The Lao Civil Code is the culmination of judicial cooperation between the two countries. Mrs. Pany approved the adoption of the Lao Civil Code as the President of the National Assembly in 2018.

Mrs. Pany visited Japan in 2015 to attend "WAW! 2015" Conference, the international symposium on the promotion of women's advancement. As a female leader representing the Lao PDR, Mrs. Pany expressed her strong support for gender equality and women's empowerment, which is also one of the most important priorities for the Government of Japan. She expressed her willingness to work with Japan to communicate these priorities to the international society. During her visit to Japan, she met with then Prime Minister Abe Shinzo as well as the Speaker and the President of both houses of the Diet, and also had the opportunity to meet with female Diet members from the Japan-Laos Parliamentary Friendship Association. In addition to deepening bilateral relations in the political and diplomatic spheres, she also encouraged personal exchanges between women leaders of the two countries.

As Vice President of the Lao PDR, Mrs. Pany continues to contribute to the strengthening of bilateral relations between Japan and Laos. In August 2021, she attended the handover ceremony of vaccines provided by Japan to Laos as part of support for measures to address the COVID-19 pandemic. As the representative of the Lao government, she expressed her gratitude while recognizing the contribution to the promotion of the friendship between Japan and Laos.

We look forward to Mrs. Pany Yathotou's continued active role in promoting friendly cooperation and strategic partnership between Japan and the Lao PDR.

(end)

# Press Release

ການປະດັບຫຼຽນກຽດຕິຄຸນອາທິດອຸໄທຊັ້ນ I ປະຈຳປີ 2022
ໃຫ້ແກ່ ພະນະທ່ານ ນາງ ປານີ ຢາທໍ່ຕູ້, ຮອງປະທານປະເທດ ແຫ່ງ ສປປ ລາວ

ວັນທີ 3 ພະຈິກ 2022
ສະຖານທູດຍີ່ປຸ່ນປະຈຳລາວ

ໃນວັນທີ 3 ພະຈິກ 2022, ລັດຖະບານຍີ່ປຸ່ນໄດ້ປະກາດລາຍຊື່ຊາວຕ່າງຊາດຜູ້ທີ່ໄດ້ຮັບຫຼຽນກຽດຕິຄຸນອາທິດອຸໄທຊັ້ນ I ໃນລະດູໃບໄມ້ຫຼົ່ນປະຈຳປີ 2022. ແລະ ພະນະທ່ານນາງ ປານີ ຢາທໍ່ຕູ້ ກໍໄດ້ຮັບຫຼຽນກຽດຕິຄຸນອາທິດອຸໄທ ຊັ້ນ I ດ້ວຍຜົນງານການປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການເພີ່ມທະວີສາຍພົວພັນ ແລະ ມິດຕະພາບອັນດີງາມລະຫວ່າງ ຍີ່ປຸ່ນ ແລະ ສປປ ລາວ. ຫຼຽນກຽດຕິຄຸນອາທິດອຸໄທ ຊັ້ນ I ເປັນຫຼຽນອັນຊົງກຽດຂອງປະເທດຍີ່ປຸ່ນ ທີ່ມອບໃຫ້ແກ່ບຸກຄົນຜູ້ທີ່ມີການປະກອບສ່ວນຢ່າງພົ້ນເດັ່ນໃນການຊຸກຍູ້ສົ່ງເສີມສາຍພົວພັນສອງຝ່າຍ.

ໃນໄລຍະທີ່ດຳລົງຕຳແໜ່ງປະທານສະພາແຫ່ງຊາດ (2010-2021), ພະນະທ່ານໄດ້ມີສ່ວນຮ່ວມສຳຄັນໃນການພັດທະນາສາຍພົວພັນສອງຝ່າຍ ຜ່ານການຮ່ວມມືຢ່າງກວ້າງຂວາງກັບປະເທດຍີ່ປຸ່ນ. ພະນະທ່ານມີບົດບາດສຳຄັນໃນການແລກປ່ຽນຢ້ຽມຢາມລະຫວ່າງລັດຖະສະພາທັງສອງຝ່າຍ ໂດຍເພິ່ນໄດ້ໄປຢ້ຽມຢາມຍີ່ປຸ່ນເຖິງ 3 ຄັ້ງ ແລະ ເປັນເຈົ້າພາບຕ້ອນຮັບການມາຢ້ຽມຢາມລາວ ຂອງ ຄະນະລັດຖະສະພາຍີ່ປຸ່ນ. ນອກນັ້ນ ພະນະທ່ານ ຍັງໄດ້ນຳພາ ແລະ ສົ່ງເສີມໂຄງການຮ່ວມມືຍີ່ປຸ່ນ-ລາວ ໃນຫຼາກຫຼາຍຂະແໜງການ ອີກດ້ວຍ. ປີ 2012 ຂໍ້ຕົກລົງເພື່ອລິເລີ່ມການຮ່ວມມືດ້ານປະມວນກົດໝາຍແພ່ງຂອງລາວ ກໍໄດ້ຮັບການລົງນາມໂດຍ ພະນະທ່ານ ນາງ ປານີ ແລະ ພະນະທ່ານ ທາກິ, ລັດຖະມົນຕີກະຊວງຍຸຕິທຳຍີ່ປຸ່ນ ໃນລະຫວ່າງການມາຢ້ຽມຢາມ ສປປ ລາວ ຂອງເພິ່ນ. ປະມວນກົດໝາຍແພ່ງສະບັບດັ່ງກ່າວ ຖືວ່າເປັນການຮ່ວມມືຂັ້ນສູງສຸດທາງດ້ານນິຕິກຳລະຫວ່າງສອງປະເທດ. ເຊິ່ງກົດໝາຍແພ່ງລາວ ສະບັບປີ 2018 ກໍ່ໄດ້ຮັບການອະນຸມັດ ໂດຍ ພະນະທ່ານ ນາງ ປານີ ໃນຖານະປະທານສະພາແຫ່ງຊາດ ເຊັ່ນກັນ.

ປີ 2015 ພະນະທ່ານ ໄດ້ເຂົ້າຮ່ວມກອງປະຊຸມ “WAW! 2015” ທີ່ຍີ່ປຸ່ນ ເຊິ່ງເປັນກອງປະຊຸມສາກົນກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. ໃນນາມຜູ້ນຳຍິງຕົວແທນຂອງປະເທດລາວ, ພະນະທ່ານ ໄດ້ສະແດງການສະໜັບສະໜູນຢ່າງເຂັ້ມແຂງເພື່ອຄວາມສະເໝີພາບທາງເພດ ແລະ ການສ້າງຄວາມເຂັ້ມຂອງແມ່ຍິງ, ເຊິ່ງຖືວ່າເປັນໜຶ່ງໃນວຽກງານບູລິມະສິດທີ່ຍີ່ປຸ່ນໃຫ້ຄວາມສຳຄັນສູງສຸດ. ທ່ານຍັງໄດ້ສະແດງເຈດຈຳນົງທີ່ຈະຮ່ວມມືກັບຍີ່ປຸ່ນ ເພື່ອສື່ສານບັນດາບູລິມະສິດເຫຼົ່ານີ້ອອກໄປສູ່ສັງຄົມສາກົນ. ໃນໄລຍະການຢ້ຽມ

# Press Release

ຢາມ, ພະນະທ່ານນາງ ປານີ ໄດ້ພົບກັບຜູ້ນຳຍີ່ປຸ່ນຫຼາຍທ່ານ ເຊັ່ນ: ນາຍົກລັດຖະມົນຕີ ພະນະທ່ານ ອາເບະ ຊິນໂຊ, ປະທານລັດຖະສະພາ ແລະ ປະທານສະພາຜູ້ແທນລາສະດອນຂອງຍີ່ປຸ່ນ, ພ້ອມນັ້ນ ກໍ່ໄດ້ມີໂອກາດພົບກັບສະມາຊິກສະພາຍິງ ຜູ້ທີ່ເປັນໜຶ່ງໃນຄະນະມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ ອີກດ້ວຍ. ນອກຈາກການຊຸກຍູ້ສົ່ງເສີມສາຍພົວພັນສອງຝ່າຍ ທາງດ້ານການເມືອງ ແລະ ການທູດແລ້ວ, ພະນະທ່ານຍັງຊຸກຍູ້ການແລກປ່ຽນສ່ວນບຸກຄົນລະຫວ່າງການນຳແມ່ຍິງ ຂອງສອງປະເທດ.

ໃນນາມຮອງປະທານປະເທດ ແຫ່ງ ສປປ ລາວ, ພະນະທ່ານ ກໍສືບຕໍ່ມີສ່ວນຮ່ວມໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສາຍພົວພັນສອງຝ່າຍ ຍີ່ປຸ່ນ ແລະ ລາວ. ໃນເດືອນສິງຫາ 2021, ພະນະທ່ານໄດ້ເຂົ້າຮ່ວມພິທີມອບວັກແຊັງເພື່ອສົ່ງເສີມມາດຕະການຕ້ານການລະບາດຂອງພະຍາດໂຄວິດ-19 ທີ່ສະໜອງໂດຍປະເທດຍີ່ປຸ່ນ. ພະນະທ່ານໄດ້ຕາງໜ້າໃຫ້ລັດຖະບານລາວ ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການປະກອບສ່ວນ ຂອງລັດຖະບານຍີ່ປຸ່ນ ເຊິ່ງສະແດງອອກເຖິງສາຍພົວພັນມິດຕະພາບອັນດີງາມ ລະຫວ່າງສອງປະເທດ.

ພວກເຮົາຫວັງວ່າຈະໄດ້ເຫັນການປະກອບສ່ວນຂອງພະນະທ່ານນາງ ປານີ ຢາທໍ່ຕູ້ ແລະ ບິດບາດທີ່ຫ້າວຫັນຢ່າງຕໍ່ເນື່ອງໃນການຊຸກຍູ້ສົ່ງເສີມການຮ່ວມມືຢ່າງສະໜິດແໜ້ນ ແລະ ການເປັນຄູ່ຮ່ວມຍຸດທະສາດລະຫວ່າງ ຍີ່ປຸ່ນ ແລະ ລາວ ຕໍ່ໄປ.

.